# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 18 ພຶສພາ ຂ008 (5-18-ຂ008)

## ເປັນຄົນໄວ້ເນື້ອເຊື່ອໃຈໄດ້

**ຂໍ້ພຣະຄັມພີໃນບົດຮຽນ:** 1 ຊາມູເອນ 18:1-4; 19:4-7; ຂ0:10-13, 16-17

**ພຣະຄັມພີແຫ່ງຄວາມຈິງ:** ສາຍສຳພັນທີ່ແຫນ້ນຫນຽວແມ່ນສ້າງຂຶ້ນໃນຄວາມໄວ້ວາງໃຈ, ແລະການທີ່ພວກເຮົາຈະສາມາດພິສູດໃຫ້ເຫັນໄດ້ວ່າໄວ້ເນື້ອເຊື່ອໃຈໄດ້ຫລືບໍ່ນັ້ນກໍຜ່ານການຕັດສິນໃຈແນ້ວແນ່, ຄວາມຈົງຮັກພັກດີ, ຄວາມສັດຊື່, ແລະຄວາມສເມີຕົ້ນສເມີປາຍ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃນການສ້າງສາຍສຳພັນທີ່ຫມັ້ນຄົງຢ່າງແທ້ຈິງໂດຍ:

- ການມອງເຫັນຄຸນຄ່າຂອງການໄວ້ວາງໃຈໃນສາຍສຳພັນ; ແລະ
- ການຕັດສິນໃຈເດັດດ່ຽວໃນການເລີ້ມຕົ້ນການກໍ່ຕັ້ງຄວາມໄວ້ວາງໃຈສ່ວນຕົວໃນ

## ແມ່ນຫຍັງທີ່ຂ້າພະເຈົ້າສາມາດໃຊ້ໃນການກໍ່ສ້າງຄວາມໄວ້ວາງໃຈໃນສາຍສຳພັນ?

ຂ້າພະເຈົ້າແລະພັຣຍາລິນດາໄດ້ພາກັນປະກອບເອກກະສານກອງນຶ່ງສຳລັບການລົງທະບຽນຂອງລູກພວກຂ້າພະເຈົ້າຜູ້ນຶ່ງທີ່ຈະເຂົ້າໂຮງຮຽນບ່ອນໃຫມ່. ມີເອກກະສານໃບນຶ່ງທີ່ລວມທັງຄຳຖາມດັ່ງນີ້, "ໃນກໍຣະນີມີພາວະສຸກເສີນ, ມີໃຜອີກແດ່ນອກຈາກຄົນໃນຄອບຄົວທີ່ສາມາດຕັດສິນໃຈກ່ຽວກັບລູກຂອງທ່ານ?" ຂນະທີ່ພວກຂ້າພະເຈົ້າມີຫມູ່ເພື່ອນຫລາຍຄົນຈຶ່ງເຮັດໃຫ້ບັນຊີລາຍຊື່ນັ້ນສັ້ນເຂົ້າ. ສອງສາມຊື່ທີ່ພວກຂ້າພະເຈົ້າຈົດລົງລ້ວນແຕ່ເປັນເພື່ອນທີ່ໄວ້ເນື້ອເຊື່ອໃຈໄດ້. ເພື່ອນຂອງທ່ານຈະລົງຊື່ຂອງທ່ານໃສ່ໃນບັນຊີລາຍຊື່ຂອງພວກເຂົາບໍ່? ທ່ານເປັນຄົນທີ່ໄວ້ເນື້ອເຊື່ອໃຈໄດ້ບໍ່?

ເຫດການທີ່ພວກເຮົາສຶກສາໃນມື້ນີ້ແມ່ນຈາກຊີວິດຂອງດາວິດຊຶ່ງມີຄຸນສົມບັດສີ່ຢ່າງຂອງຄົນທີ່ໄວ້ວາງໃຈໄດ້. ແມ່ນຫຍັງໃນການສຶກສານີ້ຈະສອນທ່ານກ່ຽວກັບການຕັດສິນໃຈເດັດດ່ຽວ, ຈົງຮັກພັກດີ, ສັດຊື່, ແລະສມ່ຳສເມີ, ແລະວິທີທີ່ຈະເອົາມາປະກອບໃຊ້ສາຍສຳພັນແຕ່ລະມື້ຂອງທ່ານ? ທັງສີ່ພາກເຫລົ່ານີ້ຊ່ວຍຕອບຄຳຖາມທີ່ວ່າ "ແມ່ນຫຍັງທີ່ຂ້າພະເຈົ້າສາມາດໃຊ້ໃນການກໍ່ສ້າງຄວາມໄວ້ວາງໃຈໃນສາຍສຳພັນ?"

## ສຶກສາພຣະຄັມພີ

### 1. ການຕັດສິນໃຈແນ້ວແນ່ (1 ຊາມູເອນ 18:1-4)

**ດາວິດ**ໄດ້ກ້າວເຂົ້າສູ່ຊີວິດຂອງໂຢນາທານໄດ້ກໍຍ້ອນຄວາມກ້າຫານຂອງດາວິດໃນການຮັບໃຊ້ພໍ່ຂອງໂຢນາທານ, ກະສັດ**ຊາອູນ**. ຫລັງຈາກທີ່ດາວິດໄດ້ຂ້າໂກລີອາດແລະໄດ້ອາສາຮັບໃຊ້ກະສັດ, ດາວິດໄດ້ກາຍເປັນພາກສ່ວນນຶ່ງຂອງຄົວເຮືອນກະສັດແລະມີສ່ວນໃນຊີວິດຂອງໂຢນາທານ. ພວກເຂົາໄດ້ກາຍເປັນເພື່ອນກັນຢ່າງໄວວາ. ບໍ່ເຫິງເທົ່າໃດດາວິດມີຄວາມຫມາຍຫລາຍຕໍ່**ໂຢນາທານ**ທີ່ລາວ**ຮັກດາວິດຫລາຍຄືກັນກັບລາວຮັກຕົວເອງ**. ການທີ່ຮູ້ຈັກວ່າຄວາມເປັນເພື່ອນກັບດາວິດນັ້ນມີຄວາມຫມາຍຫລາຍຕໍ່ລາວ, ແລະການທີ່ຕ້ອງການຈະຖວາຍກຽດຕໍ່ພຣະເຈົ້າໂດຍການເປັນເພື່ອນທີ່ສັດຊື່ຕໍ່ດາວິດ. **ໂຢນາທານໄດ້ທຳສັນຍາກັບດາວິດ**. ພວກເຂົາມີການຕັດສິນໃຈອັນຫມັ້ນຄົງທີ່ຈະເປັນເພື່ອນທີ່ສັດຊື່ຕໍ່ກັນແລະກັນ.

ໃນສມັຍນີ້ມີໜ້ອຍຄົນທີ່ຈະເຮັດສັນຍາແບບຈິງຈັງໃນການເປັນເພື່ອນ, ແຕ່ວ່າພວກເຮົາສາມາດເຫັນໄດ້ວ່າພວກຄົນທີ່ມີສ່ວນໃນຊີວິດຂອງພວກເຮົາມີຄວາມໝາຍຫລາຍຊ່ຳໃດນັ້ນແລະພວກເຮົາກໍຊອກຫາງຂອງພວກເຮົາເອງໃນການສເລີມສລອງການຕັດສິນໃຈອັນໝັ້ນຄົງທີ່ຈະຢືນຄຽງບ່າຄຽງໄຫລ່ຕໍ່ຊື່ງກັນແລະກັນ ໃນຖານະເປັນເພື່ອນຄຣິສຕຽນດ້ວຍກັນ.

ບຣາຍແອນເຄີຍເປັນເພື່ອນຮ່ວມງານກັບຂ້າພະເຈົ້າແລະໄດ້ກາຍເປັນເພື່ອນທີ່ຮັກແພງກັນ. ລາວເປັນຄົນທີ່ຕັ້ງໃຈຟັງ, ເປັນທີ່ປຶກສາ, ແລະເປັນຜູ້ຊ່ວຍ. ເຖິງແມ່ນວ່າລາວໄດ້ຍ້າຍໄປວຽກງານໃໝ່ແລ້ວກໍຕາມ, ສາຍສຳພັນແບບເພື່ອນມິດຂອງພວກເຮົາຍັງສືບຕໍ່ໄປ. ມື້ນີ້ງ, ການທີ່ສຳນຶກໄດ້ເຖິງການສນັບສນູນຂອງລາວມີຄວາມໝາຍຫລາຍຂ້າພະເຈົ້າຈຶ່ງບອກລາວວ່າ "ພຣະເຈົ້າໄດ້ປະທານອ້າຍນ້ອງທີ່ດີໃຫ້ຂ້ອຍ." ແຕ່ວ່າຖ້າວ່າພຣະເຈົ້າຫາກບອກໃຫ້ຂ້ອຍເລືອກເອົາອ້າຍນ້ອງອີກຜູ້ນື່ງ, ຂ້ອຍກໍຈະເລືອກເອົາເຈົ້າ." ໃນມື້ນັ້ນທີ່ພວກເຮົາໄດ້ເຫັນແລະສເລີມສລອງການເປັນເພື່ອນມິດຂອງພວກເຮົາ.

ໂຢນາທານສະແດງການເປັນເພື່ອນຂອງລາວກັບດາວິດໂດຍມອບ**ເສື້ອຄຸມ**ຂອງລາວ...**ເຄື່ອງສູ້ຣົບ, ດາບ, ທະນູ, ແລະສາຍແອວໃຫ້ລາວ**. ຂອງຂວັນເຫລົ່ານີ້ເປັນຂອງສ່ວນຕົວ, ໃນການເຕືອນໃຈດາວິດເຖິງການເປັນເພື່ອນຂອງໂຢນາທານ. ຂອງເຫລົ່ານັ້ນຍັງເປັນປໂຍດຫລາຍສຳລັບດາວິດໃນການຕຽມພ້ອມຮັບໃຊ້ກະສັດຢ່າງມີປະສິດທິພາບ.

ເພື່ອນຂ້າພະເຈົ້າ, ຈິມ, ໄດ້ຮັບໃຊ້ປະເທດຊາດຂອງພວກເຮົາໂດຍເປັນທະຫານເຮືອ (Marine) ຝ່າຍບົກ. ຈິມເປັນຄົນມັກອະທິຖານແລະລາວຢາກໃຫ້ຂ້າພະເຈົ້າຮູ້ວ່າລາວອະທິຖານເພື່ອຂ້າພະເຈົ້າໃນຖານະທີ່ຂ້າພະເຈົ້າເປັນຜູ້ນຳນະມັສການ. ມື້ນື່ງ, ຈິມໄດ້ນຳຂອງຂວັນອັນນື່ງມາໃຫ້ຂ້າພະເຈົ້າທີ່ຫ້ອງການ, ລຽນຂອງຄ້າຍທະຫານເຮືອຝ່າຍ ບົກ, ເພື່ອເຕືອນຂ້າພະເຈົ້າວ່າລາວ "ອະທິຖານເພື່ອຢູ່ຕລອດເວລາ." ທຸກໆວັນອາທິດ, ກ່ອນຂ້າພະເຈົ້າຈະອອກຈາກຫ້ອງການເພື່ອໄປນຳນະມັສການ, ຂ້າພະເຈົ້າກໍເອົາຫລຽນນັ້ນໃສ່ຖົງສົ້ງເພື່ອເຕືອນຕົນເອງວ່າຈິມອະທິຖານເພື່ອທັງສນັບສນູນແລະໄດ້ຕັດສິນໃຈເດັດດ່ຽວຕໍ່ການເປັນເພື່ອນມິດກັນ. ຂ້າພະເຈົ້າຮັບໃຊ້ພຣະເຈົ້າຢ່າງມີປະສິດທິພາບເພາະວ່າຂ້າພະເຈົ້າຮູ້ວ່າເພື່ອນທີ່ສັດຊື່ໄດ້ "ອະທິຖານເພື່ອແລ້ວ."

**๒. <u>ຈົງຮັກພັກດີ</u>** (1 ຊາມູເອນ 19:4-7)

ເມື່ອພັຣຍາຂອງຂ້າພະເຈົ້າ, ລິນດາ, ຕອນຍັງຢູ່ໃນໂຮງຮຽນປະຖົມ, ລາວມັກເກມເຕະບານຫລາຍທີ່ສຸດຕອນພັກຜ່ອນເມື່ອເພື່ອນຂອງລາວຄົນນື່ງຕັດແຖວແລະເຕະບານໄປໄກໆຈົນເຖິງອີກສົ້ນນື່ງຂອງເດີ່ນ. ການທີ່ເຄີຍປະເຊີນກໍຣະນີແນວນີ້ມາກ່ອນ, ນາຍຄຣູຕ້ອງໃຫ້ຄຳແນະນຳໝົດທັງຫ້ອງຈົນກວ່ານັກຮຽນຜູ້ທີ່ບໍ່ເຮັດຕາມກົດນັ້ນໄປນຳເອົາບານກັບມາ. ບັນຫານັ້ນມີຢູ່ວ່ານັກຮຽນຜູ້ທີ່ເຮັດແນວນັ້ນແມ່ນເປັນນັກກວນໃນຫ້ອງ, ເພາະເປັນເດັກຍິງທີ່ໃຫຍ່ກວ່າໝົດທຸກຄົນໃນຫ້ອງ. ເມື່ອລິນດາບໍ່ຍອມໄປນຳເອົາບານໃຫ້ລາວ, ເດັກຍິງຄົນນັ້ນກໍຍ່າງຕຳລິນດາໄປແລະນາບຂູ່ລາວ. ເພື່ອນນັກຮຽນໝົດທັງຫ້ອງພາກັນຢືນແຂງຢູ່ເພາະຄວາມຢ້ານ, ຍົກເວັ້ນແຕ່ໂທມາຊີນາ. ເດັກຍິງສາວຄົນນີ້ກໍກ້າວເຂົ້າມາຢືນຂັ້ນກາງລະຫວ່າງລິນດາກັບນາງນັກກວນແລະບໍ່ຍອມໃຫ້ນັກກວນທຳຮ້າຍຕໍ່ເພື່ອນຂອງລາວ. ການທີ່ເຫັນວ່າລິນດາມີເພື່ອນທີ່ຈົງຮັກພັກດີ, ນັກກວນຜູ້ນັ້ນກໍເຊົາລົບກວນ.

ກະສັດ**ຊາອູນ**ກໍເລີ້ມຕໍ່ສູ້ກັບດາວິດເພາະຄວາມອິດສາຕໍ່ຄວາມສຳເຣັດຜົນແລະຊື່ສຽງຂອງດາວິດ. ຊາອູນຮູ້ສຶກວ່າຕົນຖືກນາບຂູ່ຍ້ອນການກະທຳຕ່າງໆທີ່ປະສົບຜົນດີຕລອດຂອງດາວິດຈຶ່ງອອກຄຳສັ່ງໃຫ້**ໂຢນາທານ**ແລະຂ້າໃຊ້ຂອງລາວໃຫ້ຂ້າດາວິດເສັຽ. ການທີ່ຮູ້ຈັກເຖິງຄວາມປາຖນາຂອງພໍ່ລາວ, ແລະເປັນຫ່ວງຕໍ່ດາວິດຫລາຍ. ໂຢນາທານປະເຊີນກັບບັນຫາຫຍຸ້ງຍາກຫລາຍ. ລາວສາມາດປົກປ້ອງດາວິດແລະສ່ຽງທີ່ຈະເສັຽຕໍ່ການຍອມຮັບຮູ້ຂອງພໍ່ລາວຫລືວ່າລາວສາມາດທຳເສີຍແລະປ່ອຍໃຫ້ດາວິດເຖິງແກ່**ຄວາມຕາຍ**. ໂຢນາທານເລືອກເອົາທາງທີ່ຈົງຮັກພັກດີຕໍ່ດາວິດ. ໂຢນາທານ**ເວົ້າເຖິງຄວາມດີຂອງດາວິດ**. ລາວຢືນຢັນວ່າດາວິດບໍ່ໄດ້ເຮັດຜິດອັນໃດຕໍ່ຊາອູນ, ແລະຄວາມຈິງ, ການກະທຳທີ່ດີຂອງລາວກໍ**ເປັນຜົນດີອັນໃຫຍ່ຫລວງ**ຕໍ່ກະສັດ. ຊາອູນຟັງຄຳແນະນຳຂອງໂຢນາທານ. ລາວໄດ້ໃຫ້ສັນຍາວ່າ

ຈະບໍ່ເຮັດໃຫ້ມີອັນຕະລາຍໃດໆເກີດຂຶ້ນແກ່ດາວິດແລະໄດ້ອະນຸຍາດໃຫ້ລາວເຂົ້າມາໃນຣາຊວັງເພື່ອເປັນຜູ້ຮັບໃຊ້.

ຄຳເວົ້າຂອງໂຢນາທານຕໍ່ຊາອູນແມ່ນແຕ່ຄວາມດີກ່ຽວກັບດາວິດແລະມີປໂຍດຫລາຍຕໍ່ກະສັດ. ແຕ່ວ່າຄຳເວົ້າຂອງໂຢນາທານແຫ່ງເວົ້າຫລາຍກ່ຽວກັບຕົວລາວເອງ, ຄວາມຈົງຮັກພັກດີຕໍ່ເພື່ອນຂອງລາວ, ແລະຄວາມເຕັມໃຈຂອງລາວທີ່ຈະປະເຊີນກັບຜູ້ທີ່ມີອຳນາດທີ່ສຸດໃນອິສຣາເອນເພື່ອເຫັນແກ່ດາວິດ. ພວກເຮົາກໍສາມາດອອກສຽງເພື່ອຜູ້ທີ່ພວກເຮົາຮູ້ວ່າສັດຊື່ແລະໜູນນ້ຳໃຈພວກທີ່ບໍ່ຖືກຕ້ອງປອງດອງກັນໃຫ້ກັບຄືນດີກັນອີກໃຫມ່ໄດ້ເຊັ່ນກັນ. ແຕ່ວ່າພວກເຮົາມັກຈະເວົ້າກ່ຽວກັບຕົວພວກເຮົາເອງຫລາຍເກີນໄປກວ່າຜູ້ອື່ນໆສເມີ. ຄຳເວົ້າຂອງພວກເຮົາເປີດເຜີຍໃຫ້ເຫັນນີສັຍທີ່ແຂງແກ່ນຂອງພວກເຮົາແລະຄວາມເລິກແຫ່ງຄວາມຈົງຮັກພັກດີຂອງພວກເຮົາ. ແມ່ນຫຍັງຄືສິ່ງທີ່ໂຢນາທານໄດ້ກະທຳເພື່ອດາວິດ, ພຣະເຢຊູໄດ້ກະທຳເພື່ອທ່ານ. ເມື່ອຄວາມຜິດບາບຂອງພວກເຮົາຫາກນຳເຮົາໃຫ້ຕໍ່ຕ້ານກັບພຣະເຈົ້າ. ພຣະເຢຊູເປັນຜູ້ກາງເພື່ອໃຫ້ພວກເຮົາກັບຄືນດີກັບພຣະບິດາຂອງພຣະອົງຜູ້ສະຖິດໃນສວັນ (1 ຕີໂມທຽວ 2:5).

**3. <u>ສັດຊື່</u>** (1 ຊາມູເອນ 20:10-13)

ການກະທຳທີ່ກ້າຫານຂອງໂຢນາທານໄດ້ຢຸດຄວາມໂກດເຄືອງຂອງຊາອູນຕໍ່ດາວິດ ໄດ້ປ່ຽນແນວຄິດຂອງຊາອູນແລະນຳລາວໃຫ້ເຮັດຄຳສັນຍາວ່າຈະບໍ່ທຳຮ້າຍດາວິດ. ແຕ່ກໍຫນ້າເສັຽໃຈ, ຊາອູນບໍ່ໄດ້ຮັກສາຄຳສັນຍາໄວ້ດົນ. ຫລັງຈາກທີ່ດາວິດໄດ້ຊະນະພວກຟີລິສຕິນໃນສານຣົບ, ຄວາມກຽດຊັງຂອງຊາອູນທີ່ມີຕໍ່ລາວກໍກັບຄືນມາ. ຂນະທີ່ດາວິດກຳລັງຫລິ້ນພິນໃຫ້ຊາອູນຟັງ, ຊາອູນພະຍາຍາມຂ້າລາວດ້ວຍຫອກ. ແຕ່ຫອກບໍ່ຖືກລາວແລະດາວິດກໍໄດ້ປົບຫນີໄປ. ຕໍ່ຈາກນັ້ນຊາອູນຈຶ່ງວາງແຜນຂ້າດາວິດຢູ່ທີ່ເຮືອນຂອງລາວ, ແຕ່ວ່າດາວິດ, ໄດ້ຮັບການຊ່ວຍເຫລືອຈາກມີຄານເມັຽຂອງລາວ, ລາວຈຶ່ງປົບຫນີໄປໄດ້ອີກເທື່ອນຶ່ງ. ຂນະທີ່ຊາອູນຕິດຕາມດາວິດໄປທີ່ນາລົດ, ດາວິດກໍລອດພົ້ນໄປຊອກຫາໂຢນາທານ. ດາວິດຕ້ອງການຢາກຈະຮູ້ວ່າລາວໄດ້ເຮັດຫຍັງຜິດຈຶ່ງເຮັດໃຫ້ຊາອູນຕາມຂ້າລາວ. ລາວຢາກຮູ້ອີກວ່າຖ້າຄວາມປາຖນາຂອງຊາອູນທີ່ຈະຂ້າລາວມັນຈະມີວັນສິ້ນສຸດບໍ່. ການມອງເຫັນເພື່ອນຂອງລາວກຳລັງມີບັນຫາອັນໜັກຫນ່ວງ, ໂຢນາທານໃຫ້ສັນຍາວ່າຈະບອກຄວາມຈິງໃຫ້ແກ່ດາວິດ.

ຄວາມສັດຊື່ຂອງໂຢນາທານປ້ອງກັນຊີວິດຂອງດາວິດໄວ້ໄດ້. ຂ້າພະເຈົ້າກໍເຊື່ອວ່າເພື່ອນທີ່ສັດຊື່ແລະຄອບຄົວປ້ອງກັນຊີວິດຂອງຂ້າພະເຈົ້າໄວ້ເຊັ່ນກັນ. ຄົນທີ່ທ່ານຮູ້ຈັກແລະຮັກຕົກໃນອັນຕະລາຍ. ພອນສວັນຂອງທ່ານຄືຄວາມສັດຊື່ຈະຊ່ວຍປ້ອງກັນຮັກສາຊີວິດຂອງຄົນໃດຄົນນຶ່ງໄວ້ໄດ້.

**4. <u>ສມ່ຳສເມີ</u>** (1 ຊາມູເອນ 20:16-17)

ໂຢນາທານໄດ້ເຫັນດາວິດອົດທົນຕໍ່ການເກີດຂຶ້ນຂອງພັຍອັນຕລາຍ, ບໍ່ສາມາດກະຕວງເຖິງສາຍສຳພັນຂອງກະສັດຊາອູນ. ລາວຍັງເຫັນວ່າດາວິດມີຄວາມຕ້ອງການຢາກມີສາຍສຳພັນທີ່ເພິ່ງອາສັຍໄດ້ຢ່າງສມ່ຳສເມີ, ໂຢນາທານກໍໃຫ້ຄຳຫມັ້ນສັນຍາກັບດາວິດອີກເທື່ອນຶ່ງ, ເປັນຄຳສັນຍາອັນຫມັ້ນຄົງທີ່ດາວິດສາມາດເພິ່ງອາສັຍຕໍ່ການອູ້ມຊູສນັບສນູນອັນຊື່ງເຕັມດ້ວຍຄວາມຮັກຂອງລາວ. ຊີວິດແມ່ນຍາກທີ່ຈະກະຕວງໄດ້. ຫລາຍຄົນກໍຍັງລັ່ງເລຕັດສິນໃຈບໍ່ໄດ້ວ່າຈະເພິ່ງອາສັຍຜູ້ໃດຜູ້ນຶ່ງຫລືສິ່ງໃດສິ່ງນຶ່ງ. ພວກເຮົາສາມາດໃຫ້ຄວາມຫວັງແຫ່ງຄວາມສມ່ຳສເມີແກ່ພວກເຂົາ. ພວກເຮົາສາມາດໃຫ້ຄຳສັນຍາແລະຮັກສາໄວ້ເຖິງການເປັນເພື່ອນທີ່ອູ້ມຊູສນັບສນູນ.

ຈິມແລະໄວໂອລາເປັນຄູ່ຫົວຜົວເມັຽເຖົ້າທີ່ສຸຂພາບຊຸດໂຊມ ແລະພ້ອມທັງລູກເຕົ້າກໍບໍ່ໄດ້ຢູ່ໃນເມືອງນັ້ນດ້ວຍ. ເມື່ອຂ້າພະເຈົ້າຖາມພວກເຂົາວ່າໃຜພາພວກເຈົ້າໄປຊື້ເຂົ້າປາອາຫານຫລືໄປຫາຫມໍ. ພວກເຂົາຕອບວ່າ, "ຣໍເຣັສກັບອາລິສຊ່ວຍພວກເຮົາຢູ່ສເມີ." ຂ້າພະເຈົ້າກໍບໍ່ຮູ້ວ່າສອງຄອບຄົວນີ້ອາດຈະໃກ້ຊິດກັນໂດຍທາງສາຍເລືອດ, ແຕ່ຂ້າພະເຈົ້າຊາບຕາມທີຫລັງວ່າສອງຄອບຄົວນີ້ຕິດກັນດ້ວຍສາຍສຳພັນແບບນຶ່ງອີກ. ຫລາຍປີຜ່ານມາແລ້ວຣໍເຣັສເຄີຍຮັບໃຊ້ເປັນຜູ້ປົກຄອງໃນໂບດທີ່ຈິມແລະໄວໂອລາໄປນັ້ນ. ສາຍສຳພັນຈາກການຮັບໃຊ້ນັ້ນກາຍເປັນເພື່ອນມິດທີ່ຮັກແພງກັນ. ຣໍເຣັສແລະອາລິສໃຫ້ກຽດການເປັນມິດຂອງພວກເຂົາໂດຍການຮັບໃຊ້ພວກເຂົາຕລອດຊີວິດ.

ພຣະເຈົ້າໃຊ້ຄວາມສເມີຕົ້ນສເມີປາຍຂອງພວກເຮົາໃນສາຍສຳພັນເພື່ອເປີດເຜີຍຄວາມສັດຊື່ຂອງພຣະອົງຕໍ່

ພວກຄົນທີ່ຕ້ອງການທີ່ຢາກຮູ້ຈັກກັບພຣະອົງ. ຄົນເລັ້ມເຊື່ອວ່າພວກເຂົາສາມາດເພິ່ງອາສັຍພຣະເຈົ້າໄດ້ເມື່ອພວກເຮົາ ທາກສະແດງໃຫ້ເຫັນວ່າພວກເຂົາສາມາດເພິ່ງອາສັຍພວກເຮົາໄດ້.

ຂ້າພະເຈົ້າຂຽນຈົດໝາຍສະບັບນຶ່ງເຖິງຜູ້ທີ່ຄົ້ນພົບຮ້ານອາຫານສາຂາກຸ່ມໃຫຍ່, ລາວເປັນຄຣິສຕຽນທີ່ເຂັ້ມແຂງ, ເພື່ອເຊີນລາວໃຫ້ມາເທສນາແບ່ງປັນທີ່ໂບດຂອງພວກຂ້າພະເຈົ້າ. ລາວໄດ້ຂຽນຕອບມາວ່າລາວບໍ່ສາມາດມາແບ່ງປັນໃນວັນອາທິດ. ລາວໄດ້ເຮັດສັນຍາກັບພວກກຸ່ມເດັກຊາຍຊັ້ນປະຖົມວ່າຈະເປັນຄຣູສອນໂຮງຮຽນວັນອາທິດແກ່ພວກເຂົາແລະລາວຈະບໍ່ອະນຸຍາດໃຫ້ສິ່ງໃດຖ່ວງດຶງຈາກຄຳສັນຍານັ້ນ. ຈົດໝາຍຂອງລາວມີພະລັງຫລວງຫລາຍກວ່າຄຳເທສນາສຳລັບຂ້າພະເຈົ້າ. ລາວໄດ້ສອນຂ້າພະເຈົ້າໃຫ້ເຫັນເຖິງຄຸນຄ່າຂອງຄວາມສເມີຕົ້ນສເມີປາຍໃນສາຍສຳພັນ. ຂ້າພະເຈົ້າແນ່ໃຈວ່າຄວາມສັດຊື່ຂອງລາວຈະເຮັດໃຫ້ພວກກຸ່ມເດັກຊາຍເຫລົ່ານັ້ນໄດ້ສຳຜັດກັບຄວາມສັດຊື່ຂອງພຣະເຈົ້າຂອງພວກເຮົາ.

## ບົດຮຽນຊີວິດ

ທ່ານໄດ້ຮຽນເຖິງການເປັນເພື່ອນມິດທີ່ດາວິດມີຕໍ່ໂຢນາທານແລະກໍຄຶດວ່າຢູ່ວ່າຈະໄປຫາເພື່ອນທີ່ໄວ້ເນື້ອເຊື່ອໃຈໄດ້ຢູ່ໃສ. ບ່ອນເລັ້ມຕົ້ນທີ່ດີທີ່ສຸດຄືພັດທະນາຄຸນນະພາບທີ່ຈະເຮັດໃຫ້ທ່ານເປັນເພື່ອນທີ່ໄວ້ເນື້ອເຊື່ອໃຈກ່ອນ. ທູນຕໍ່ພຣະເຈົ້າໃຫ້ປະທານໂອກາດໃນການດຳຣົງຊີວິດອັນເຕັມໄປດ້ວຍນິສັຍທີ່ໄວ້ເນື້ອເຊື່ອໃຈທີ່ພວກເຮົາໄດ້ຮຽນນຳກັນໃນມື້ນີ້. ເຊັ່ນພອນສວັນໃນການຕັດສິນໃຈແນ້ວແນ່ຂອງທ່ານ, ຄວາມຈົງຮັກພັກດີ, ຄວາມສັດຊື່, ແລະຄວາມສເມີຕົ້ນສເມີປາຍຈະກັບຄືນມາຫາທ່ານໂດຍຜ່ານພວກຄົນທີ່ໄດ້ຮັບພຣະພອນຈາກຊີວິດຂອງທ່ານ. ທ່ານມີຄຸນນະພາບນິສັຍທີ່ພຣະຄັມພີໄດ້ເປີດເຜີຍແກ່ພວກເຮົາໃນມື້ນີ້ບໍ່?

ທ່ານພ້ອມທີ່ຈະທູນຕໍ່ພຣະເຈົ້າໃຫ້ຊ່ວຍທ່ານພັດທະນາສ້າງຊີວິດທີ່ໄວ້ເນື້ອເຊື່ອໃຈບໍ່?

- ໃນໂລກທີ່ມີຫລາຍໆຄົນພະຍາຍາມຫລີກເວັ້ນຕໍ່ການຕັດສິນໃຈແນ້ວແນ່, ເວົ້າອອກໄປແລະເຮັດໃຫ້ພວກຄົນທີ່ນຳພຣະພອນມາສູ່ຊີວິດທ່ານໃຫ້ຮູ້ວ່າທ່ານຕັດສິນໃຈແນ້ວແນ່ທີ່ຈະຮັກແລະສນັບສນູນອູ້ມຊູພວກເຂົາ.
- ຂນະທີ່ບາງຄົນກຳລັງແລ່ນໜີຈາກຄວາມສິ້ນລະອົນ, ໃຫ້ເປັນເພື່ອນທີ່ຢືນຕັ້ງໝັ້ນຢ່າງຈົງຮັກພັກດີ, ແມ້ວ່າຈະມີຜົນເສັຽຫາຍຢ່າງໜັກກໍຕາມ, ແລະຈົ່ງຢືນຕັ້ງໝັ້ນກັບເພື່ອນ.
- ເຊື່ອວ່າຄວາມຈິງເທົ່ານັ້ນທີ່ເຮັດໃຫ້ຄົນເປັນອິສຣະໄດ້, ເປັນຫ່ວງເປັນໃຍໃຫ້ພໍທີ່ຈະສັດຊື່ຕໍ່ກັນໄດ້, ຈົ່ງເວົ້າແຕ່ຄວາມເປັນຈິງໃນຄວາມຮັກທີ່ຄົນອື່ນສາມາດຮຽນໄດ້ແລະເຕີບໂຕຂຶ້ນຈາກທ່ານ.
- ມີສາຍສຳພັນຢ່າງຫລວງຫລາຍພາຍມາກທີ່ເໝືອນກັນກັບການຍ່າງຢູ່ເທິງແຜ່ນນ້ຳແຂງທີ່ບາງໆ. ສະທ້ອນຄວາມສັດຊື່ຂອງພຣະເຈົ້າໂດຍການມີຄວາມສເມີຕົ້ນສເມີປາຍ, ເປັນເພື່ອນທີ່ເພິ່ງອາສັຍໄດ້.

ຂ້າພະເຈົ້າແລະພັຣຍາລິນດາຕ້ອງເລືອກເອົາເພື່ອນທີ່ໄວ້ເນື້ອເຊື່ອໃຈກັນໄດ້ເພື່ອເບິ່ງແຍງລູກຂອງພວກຂ້າພະເຈົ້າໃນຍາມສຸກເສີນ. ພວກຂ້າພະເຈົ້າຂອບພຣະຄຸນພຣະເຈົ້າທີ່ບໍ່ຕ້ອງໃຊ້ເວລາຄິດຫາຢ່າງດົນນານ. ພຣະເຈົ້າໄດ້ອວຍພອນພວກເຮົາໃຫ້ມີເພື່ອນທີ່ສາມາດໄວ້ວາງໃຈໄດ້ຫລາຍໆຄົນ. ທຸກໆຄົນຊອກຫາຄົນທີ່ໄວ້ເນື້ອເຊື່ອໃຈທີ່ສາມາດຮັກພວກເຂົາແລະອູ້ມຊູສນັບສນູນເຂົາໃນການດຳຣົງຊີວິດ. ຄົນອື່ນຈະເຫັນໃນຕົວທ່ານວ່າເປັນເພື່ອນຢ່າງນີ້ບໍ່?